# ເຕັກນິກ ແລະ ວິທີປູກສ້າງສວນຊາ

## I. ດິນທີ່ເໝາະສົມ

ໂດຍລວມແລ້ວຕົ້ນຊາສາມາດປູກໄດ້ເກືອບທຸກປະເພດດິນທີ່ມີລະດັບຄວາມສູງຈາກໜ້ານໍ້າທະເລ 200-2.000 ແມັດ ແລະ ລະດັບນໍ້າພື້ນດິນ 1 ແມັດ, ດິນມີລະດັບຄວາມເປັນກົດ PH ຢູ່ໃນລະຫວ່າງ 4-6 ແລະ ລະດັບຄວາມຄ້ອຍຊັນບໍ່ເກີນ 30໌ , ຊັ້ນດິນຕ້ອງເລິກກວ່າ 60 ຊຕມ.

### 1. ລັກສະນະດ້ານກາຍະພາບຂອງດິນ

*ກ. ຄວາມເລິກຂອງຊັ້ນດິນ*

ຕົ້ນຊາເປັນພືດໄລຍະຍາວ, ມີລະບົບຮາກທີ່ມີການຈະເລີນເຕີບໂຕລົງທາງເລິກ ແລະ ຂະຫຍາຍຕົວອອກທາງກວ້າງ, ດູດເອົາທາດອາຫານທີ່ມີຊັ້ນດິນເລິກ (1-3 ແມັດ). ຕົ້ນຊາຈະໃຫ້ຜົນຜະລິດສູງ, ຫຼື ຕໍ່າແມ່ນຂຶ້ນກັບພື້ນທີ່ ທີ່ມີຊັ້ນດິນແຕ່ 40-60 ຊັງຕີແມັດ.

*ຂ. ໂຄງສ້າງຂອງດິນ*

ດິນທີ່ມີໂຄງສ້າງຟຸຝຸ່ຍ, ເກັບຮັກສາ ແລະ ດູດຊຶມເອົານໍ້າໄດ້ຫຼາຍ, ລະບາຍນໍ້າໄດ້ດີແມ່ນມີປະໂຫຍດຕໍ່ການຈະເລີນເຕີບໂຕຂອງລະບົບຮາກຂອງຕົ້ນຊາ ແລະ ເປັນເງື່ອນໄຂທີ່ດີໃຫ້ແກ່ບັນດາຈຸລິນຊີຂະຫຍາຍຕົວ.

*ຄ. ສ່ວນປະກອບຂອງເນື້ອດິນ*

ດິນທີ່ເໝາະສົມທີ່ສຸດ ສໍາລັບການຈະເລີນເຕີບໂຕຂອງຕົ້ນຊາ, ແມ່ນດິນຊະນິດທີ່ມີລະບົບປະສົມກົມກຽວລະຫວ່າງອາກາດ ແລະ ນໍ້າໄດ້ດີ ຊຶ່ງເອື້ອອໍານວຍໃຫ້ການຈະເລີນເຕີບໂຕຂອງຕົ້ນຊາປູກກໍ່ຄືຂະບວນການວິວັດຂອງຊີວະເຄມີທີ່ເກີດຂຶ້ນໃນດິນ (ອີງຕາມການຈັດແບ່ງປະເພດເນື້ອດິນ ຂອງອະດີດສະຫະພາບໂຊຫວຽດ).

*ງ. ລະດັບຄວາມເລິກຂອງນໍ້າພື້ນດິນ*

ນໍ້າຫຼືດິນທີ່ເໝາະສົມ ເພື່ອການປູກຊາຈະຕ້ອງມີຄວາມເລິກ 1 ແມັດ ຂຶ້ນໄປ, ຍ້ອນວ່າຕົ້ນຊາບໍ່ສາມາດທົນຕໍ່ນໍ້າຖ້ວມຂັງໄດ້ດົນ. ດັ່ງນັ້ນ, ໃນພື້ນທີ່ທີ່ມີນໍ້າໃຕ້ດິນຕື້ນດິນອີ່ມນໍ້າ, ຕົ້ນຊາຈະຕາຍໄດ້ງ່າຍ.

### 2. ພູມສັນຖານ ແລະ ລະດັບຄວາມສູງ

ພື້ນທີ່ທີ່ມີລະດັບຄວາມສູງຈາກໜ້ານ້ຳທະເລມີຜົນສະທ້ອນເຖິງຄຸນນະພາບຂອງໃບຊາ. ຊາທີ່ປູກໃນເຂດສູງ ຈະໃຫ້ຄຸນນະພາບດີ ມີຣົດຊາດແຊບຫວານຊຸ່ມຄໍ ແລະ ມີກິ່ນຫອມ, ແຕ່ຜົນຜະລິດຈະບໍ່ສູງຍ້ອນວ່າຕົ້ນຊາຈະເລີນເຕີບໂຕຊ້າ (ຊາທີ່ປູກຢູ່ໃນລະດັບຄວາມສູງຫຼາຍກວ່າ 800 ແມັດ ຂຶ້ນໄປຈະມີຣົດຊາດແຊບ). ສະພາບພູມສັນ ຖານກໍ່ມີຜົນສະທ້ອນ ເຖິງສະພາບອາກາດເຂດປູກຊາ, ຊາທີ່ປູກໃນພື້ນທີ່ຄ້ອຍຊັນ 30ໍ ຂຶ້ນໄປ ດິນບໍ່ສາມາດເກັບຮັກສານ້ຳໄດ້ເຮັດໃຫ້ດິນແຫ້ງ, ດິນຖືກເຊາະລ້າງສູງເຮັດໃຫ້ຄວາມອຸດົມສົມບູນຂອງດິນເຊື່ອມ, ຊາກໍ່ຈະໃຫ້ຜົນຜະລິດຕ່ຳ.

## II. ສະພາບພູມອາກາດ

### 1. ປະລິມານນ້ຳຝົນ

ໃນຈຸລັງຂອງໃບຊາ ມີປະລິມານນ້ຳບັນຈຸປະມານ 80%, ຊຶ່ງແມ່ນພາກສ່ວນຕົ້ນຕໍຂອງໃບຊາ, ນ້ຳລະເຫີຍອອກຈາກໃບ ເພື່ອລົດອຸນຫະພູມພ້ອມດຽວກັນນັ້ນເປັນການກະຕຸ້ນໃຫ້ລະບົບຮາກດູດເອົານ້ຳ. ນ້ຳເຮັດໜ້າທີ່ປະສານໃຫ້ທາດບຳລຸງລ້ຽງເຄື່ອນໄຫວໃນຕົ້ນຊາ. ນ້ຳສາມາດເພີ່ມພະລັງດູດຊຶມຂອງຈຸລັງ. ດັ່ງນັ້ນ, ປະລິມານນ້ຳຝົນທີ່ເໝາະສົມ ໃຫ້ແກ່ການປູກຕົ້ນຊາຈະເລີນຕົບໂຕໄດ້ດີແມ່ນ 1,300-2,000 ມີລີແມັດ/ປີ.

### 2. ອຸນຫະພູມ

ອຸນຫະພູມຂອງອາກາດແຕ່ 22˚C -28˚C ມີຜົນດີຕໍ່ການຈະເລີນເຕີບໂຕຂອງຕົ້ນຊາ, ອຸນຫະພູມຕ່ຳກວ່າ 15˚C ຫຼື ສູງກວ່າ 30˚C ຈະເຮັດໃຫ້ຍອດຊາຂະຫຍາຍຕົວຊ້າລົງ.

### 3. ແສງສະຫວ່າງ

ເຖິງແມ່ນວ່າຕົ້ນຊາຈະເປັນຕົ້ນໄມ້ປ່າ ເກີດໃນເງື່ອນໄຂຊຸ່ມເຢັນ ແລະ ຊຸ່ມຊື່ນໃນເຂດໃກ້ຄຽງກັບເຂດຮ້ອນ ລົມມໍລະສຸມຕາເວັນອອກສຽງໃຕ້ ຕົ້ນຊາເປັນຕົ້ນໄມ້ມີລັກສະນະລະດັບກາງ, ໃນໄລຍະຍັງນ້ອຍ (ອ່ອນ) ຕົ້ນຊາຈະມັກຮົ່ມແຕ່ເມື່ອຕົ້ນໃຫຍ່ (ແກ່) ແມ່ນມັກແສງແດດ.

ແນວພັນຊາໃບນ້ອຍ ມັກແສງສະຫວ່າງຫຼາຍກວ່າແນວພັນຊາໃບໃຫຍ່. ແສງສະຫວ່າງກະຈາຍໃນເຂດພູສູງ ມີຜົນຕໍ່ຄຸນນະພາບຊາ ດີກວ່າແສງສະຫວ່າງ ໂດຍກົງ.

ເຂດທີ່ມີນໍ້າໝອກຫຼາຍ, ຊຸ່ມຊື່ນ ແລະ ອຸນຫະພູມຕໍ່າ ເປັນເຂດທີ່ສາມາດຜະລິດຊາທີ່ມີຄຸນນະພາບດີ.

## III. ການອອກແບບສວນປູກ

ໂດຍສະເພາະຕົ້ນຊາ ຈະເໝາະສົມປູກໃນເຂດພູດອຍ, ອຸນຫະພູມລະຫວ່າງ 0° C ຫາ 25° C. ການອອກແບບສວນຊາ ແບບວິທະຍາສາດໃນເຂດພູດອຍ ເພື່ອໃຫ້ຜົນຜະລິດຊານັ້ນໄດ້ຫຼາຍປີສະດວກໃນການບົວລະບັດຮັກສາ ແລະ ເກັບກ່ຽວຜົນຜະລິດ. ນັ້ນຕ້ອງອອກແບບສວນຊາ ທີ່ເໝາະສົມກັບການພົວພັນ ເຖິງວົງຈອນຊີວິດຂອງຕົ້ນຊາຄື ຕ້ອງຫຼຸດຜ່ອນການເຊາະລ້າງຂອງໜ້າດິນ.

### 1. ການອອກແບບສວນຊາ

*ສວນຊາປະກອບດ້ວຍພື້ນທີ່ໃຫຍ່ນ້ອຍດັ່ງນີ້:*

ກ. ເຂດປູກຊາປະກອບດ້ວຍຫຼາຍໜ່ວຍພູມີພື້ນທີ່ຕິດຈອດກັນມີຂະໜາດເນື້ອທີ່ແຕ່ 10-20 ເຮັກຕາ.

ຂ. ສວນປູກຊາ (ພູ) ປະກອບດ້ວຍໜ່ວຍພູ 1 ໜ່ວຍ ຫຼື ເຄິ່ງໜ່ວຍພູມີເນື້ອທີ່ 2-3 ເຮັກຕາ.

ຄ. ຕອນສວນປູກມີຂະໜາດເນື້ອທີ່ 0,5-1 ເຮັກຕາປະກອບດ້ວຍແຖວຕົ້ນຊາຫຼາຍໆແຖວຈັດແບ່ງດ້ວຍເສັ້ນທາງຍ່າງນ້ອຍໆ ເພື່ອສະດວກໃນການບົວສະບັດຮັກສາ ແລະ ເກັບໃບຊາ. ຄວາມກວ້າງຂອງຕອນສວນປະມານ 20-100 ແຖວຕົ້ນຊາ, ຄວາມຍາວຂອງແຖວຕົ້ນຊາປະມານ 50-200 ແມັດ.

ງ. ແຖວຕົ້ນຊາປະກອບດ້ວຍຕົ້ນຊາປູກຕໍ່ໆກັນ, ປູກເປັນແຖວຊື່ ຫຼື ເປັນແຖວຕາມເສັ້ນວຽນຈອດ (ເສັ້ນຂອບພູ).

| ຄວາມຄ້ອຍຊັນ | ອົງສາ | ປູກເປັນແຖງ |
|---|---|---|
| ຄວາມຄ້ອຍຊັນ | 5˚-6˚ | ປູກເປັນແຖວຊື່ |
| ຄວາມຄ້ອຍຊັນ | 7˚-15˚ | ປູກເປັນແຖວກົ່ງສະຫຼັບແຖວ |
| ຄວາມຄ້ອຍຊັນ | 16˚-25˚ | ປູກເປັນແຖວຕາມພັກຂັ້ນໄດໂຄ້ງໄປຕາມເສັ້ນວຽນຈອດ |

## 2. ການອອກແບບລະບົບເສັ້ນທາງ

ກ. ເສັ້ນທາງແມ່ ແມ່ນເສັ້ນທາງເຊື່ອມຕໍ່ລະຫວ່າງເຂດຕໍ່ເຂດ (ເຂດປູກຊາ) ໜ້າທາງມີຄວາມກວ້າງ 5-6 ແມັດ, ເສັ້ນທາງມີລະບົບຮ່ອງລະບາຍນ້ຳ, ສອງຟາກທາງປູກໄມ້ສຳລັບໃຊ້ເປັນຮົ່ມ.

ຂ. ທາງເຊື່ອມຕໍ່ສວນແມ່ນເສັ້ນທາງເຊື່ອມຕໍ່ລະຫວ່າງສວນຕໍ່ສວນ, ໜ້າທາງກວ້າງ 4-5 ແມັດ.

ຄ. ທາງໃນສວນ ແມ່ນເສັ້ນທາງແຕ່ເສັ້ນທາງເຊື່ອມຕໍ່ເຂົ້າຫາສວນແຕ່ລະສວນມີຈຸດຕ່າວລົດຢູ່ຈຸດສາມແຍກຕາມຂອບທາງປູກໄມ້ໃຫ້ຮົ່ມ (ປູກຫ່າງໆ).

ງ. ທາງວິ່ງແຫວນແມ່ນ ເສັ້ນທາງວຽນໄປຕາມເສັ້ນຂອບພູຈອດຕິດກັນເລີຍ, ໜ້າທາງກວ້າງ 3 ແມັດ ໜ້າທາງງ່ຽງເຂົ້າໃນ (6°-7°), ຕາມຂອບທາງປູກຕົ້ນໄມ້ໃຫ້ຮົ່ມປູກຫ່າງໆ.

ຈ. ທາງພາຍໃນຕອນສວນ ແມ່ນເສັ້ນທາງທີ່ຕັດຕາມທາງຂວາງ (ກໍລະນີດິນພຽງ), ຕັດສະຫຼຽງ. (ກໍລະນີດິນຄ້ອຍຊັນ) ເສັ້ນທາງດັ່ງກ່າວຫ່າງກັນ 150-200 ແມັດ, ໜ້າທາງກວ້າງ 3-4 ແມັດ, ຂອບທາງບໍ່ ມີຮ່ອງລະບາຍນ້ຳ.

ສ. ທາງຍ່າງແມ່ນ ທາງຍ່າງສຳລັບບົວລະບັດຮັກສາຕົ້ນຊາມີໄລຍະຫ່າງລະຫວ່າງທາງ 50-70 ແມັດ, ຕັດຂວາງ ຫຼື ສະຫຼຽງແຖວ ຕົ້ນຊາໜ້າທາງກວ້າງ 1,2-1,3 ແມັດ, ຄວາມງ່ຽງຂອງໜ້າທາງ 10°-11° ຕາມພື້ນທີ່, ບໍ່ມີ ຮ່ອງລະບາຍນ້ຳ.

### 3. ການອອກແບບອື່ນໆ

- ລະບົບຄອງລະບາຍນ້ຳ, ຄູກັ້ນນ້ຳບໍ່ໃຫ້ໄຫຼບ່າເຂົ້າສວນຊາ, ຄູຕາມເປີ້ນພູ ແລະ ຄູແບ່ງເຂດ.

- ໃນພື້ນທີ່ 2-3 ເຮັກຕາໃດ ຕ້ອງສ້າງອ່າງເກັບນ້ຳ 1 ຈຸດ ແລະ ໃນພື້ນທີ່ 2-3 ເຮັກຕາໃດຕ້ອງສ້າງຂຸມບົ່ມຝຸ່ນຄອກ 1 ຂຸມ.

### 4. ການວາງແຜນຈັດຕັ້ງປະຕິບັດ

- ລະດູການປູກຊາ: ການອອກແບບແຖວ ແລະ ຂຸດຮ່ອງປູກໃນຊ່ວງເດືອນ 11-12 ເພື່ອກຽມປູກປີຕໍ່ໄປ.

- ພື້ນທີ່ຕ້ອງອະນາໄມກ້ຽງ ແລະ ບໍ່ໃຫ້ມີຫຍ້າ, ກໍລະນີມີຫີນ, ຕໍໄມ້ຕ້ອງໄດ້ໄຖ ຫຼື ຂຸດອອກ, ພື້ນທີ່ຈະປູກຕ້ອງໄຖ ຫຼື ຂຸດຫຼັງຈາກນັ້ນ ຈຶ່ງຂຸດແຖວເລິກ 40-45 ຊຕມ, ກວ້າງ 40-60 ຊຕມ, ຖ້າມີເງື່ອນໄຂ, ໃຫ້ປູກພືດຄຸມດິນກ່ອນ ເພື່ອເຮັດຝຸ່ນຂຽວບຳລຸງດິນ.



ການກະກຽມຂຸດແຖວປູກຊາ

## IV. ອັດຕາສ່ວນຄວາມໜາແໜ້ນຂອງຕົ້ນຊາໃນສວນປູກ

### 1. ບັນດາສ່ວນປະກອບທີ່ມີຜົນກະທົບຕໍ່ໄລຍະຫ່າງລະຫວ່າງຕົ້ນ

- ແນວພັນ: ແນວພັນທີ່ມີຊົງພຸ່ມແຄບ, ຄວນປູກຖີ່. ແນວພັນທີ່ມີຊົງພຸ່ມແຜ່ກວ້າງໃຫ້ປູກຫ່າງ.
- ດິນ: ດິນທີ່ຄ້ອຍຊັນຫຼາຍໃຫ້ປູກຖີ່, ດິນທີ່ບໍ່ຄ້ອຍຊັນຫຼາຍໃຫ້ປູກຫ່າງ.
- ກະກຽມດິນດ້ວຍແຮງງານຄົນ (ບໍ່ໃຊ້ກົນຈັກ) ອາດໃຫ້ປູກຖີ່.
- ລົງທຶນໃສ່ຝຸ່ນຫຼາຍ ແລະ ມີລະບົບທົດນໍ້າ. ໄລຍະຫ່າງການປູກຄວນໃຫ້ພໍດີແທດເໝາະກັບຕົ້ນທຶນ.
- ປູກເພື່ອຜະລິດເປັນສິນຄ້າ ເພື່ອເກັບກູ້ທຶນໄວ. ໄລຍະປູກຕ້ອງປູກຖີ່ເພື່ອເກັບຜົນຜະລິດໃຫ້ໄດ້ຫຼາຍ.

### 2. ໄລຍະຫ່າງ

ກ. ບັນດາແນວພັນຊາໃບນ້ອຍທີ່ມີການປັບປຸງສາຍແນວພັນ ເຊັ່ນ: ແນວພັນຊາຂອງຈີນ, ແນວພັນຊາຂອງຍີ່ປຸ່ນ ແລະ ແນວພັນຊາ LDP 1, LDP 2 ຂອງ ສ.ສ ວຽດນາມ ທີ່ມີຊົງພຸ່ມເຕ້ຍ ແມ່ນປູກຕາມໄລຍະຫ່າງ ດັ່ງນີ້:

| ໄລຍະຫ່າງ | ອັດຕາສ່ວນຕົ້ນ/ເຮັກຕາ |
|---|---|
| 1.2 ມ x 0.4 - 0.5 ມ | 20, 833 - 16,667 ຕົ້ນ |
| 1.3 ມ x 0.4 0.5 ມ | 19, 231 - 15,385 ຕົ້ນ |
| 1.4 ມ x 0.35 - 0.4 ມ | 20, 354 - 17,855 ຕົ້ນ |

ຂ. ແນວພັນຊາຕົ້ນໃຫຍ່ (che shan) ເຂດສູງແມ່ນປູກຕາມຮູບແບບການປູກປ່າ

- ປ່າຊາທີ່ມີເຮືອນຍອດປົກຄຸມໜາ, ໄລຍະຫ່າງການປູກແມ່ນ: 2 ມ x 3 ມ ແລະ 2 ມ x 2,5 ມ, ຄວາມໜາແໜ້ນແຕ່ 1,500-2,000 /ຕົ້ນ/ເຮັກຕາ.
- ປ່າຊາທີ່ມີເຮືອນຍອດປົກຄຸມບາງ ໄລຍະຫ່າງປູກແຕ່ 2 ມ x 2 ມ ແລະ 1,5 ມ x 2 ມ, ຄວາມໜາແໜ້ນແຕ່ 2,500-3,000 /ຕົ້ນ/ເຮັກຕາ.

# V. ເຕັກນິກການປູກຊາ

## 1. ປູກຊາດ້ວຍກິ່ງງ່າ

*ກ.* *ຂໍ້ດີ*

- ການປັກຊຳດ້ວຍກິ່ງ, ສາມາດຮັກສາໄດ້ຄຸນລັກສະນະທີ່ດີເດັ່ນຂອງຕົ້ນແມ່ພັນຊາດັ້ງເດີມ, ຜະລິດຕະພັນສູງກວ່າຊາທີ່ປູກດ້ວຍແກ່ນແຕ່ 25-30%.
- ຊາທີ່ປູກດ້ວຍກິ່ງປັກຊຳມີອາຍຸເກັບໃບໄວກວ່າຊາທີ່ປູກດ້ວຍແກ່ນ 1 ປີ.
- ການຂະຫຍາຍພັນງ່າຍ ແລະ ໄວກວ່າ.

*ຂ.* *ລະດູການປູກ*

- ຢູ່ພາກເໜືອຂອງລາວ ລະດູການປູກທີ່ເໝາະສົມທີ່ສຸດ ແມ່ນເດືອນ 7-9, ເພາະວ່າປະລິມານນ້ຳຝົນຫຼາຍກວ່າໝູ່ແມ່ນໃນຊ່ວງ 3 ເດືອນ ທີ່ກ່າວມາ ຂ້າງເທິງນີ້.
- ປູກຊາຄວນປູກ ເວລາດິນມີຄວາມຊຸ່ມພຽງພໍ, ພາຍຫຼັງຝົນຕົກ, ອາກາດມີຄວາມ ຊຸ່ມເຢັນ.

*ຄ.* *ວິທີປູກ*

- ປູກຕາມຄອງປູກທີ່ໄດ້ໃສ່ຝຸ່ນ ແລະ ຖົມດິນ.
- ຂຸດຂຸມກວ້າງ 20 ຊຕມ, ເລິກ 20-25 ຊຕມ. ຕາມໄລຍະທີ່ໄດ້ກຳນົດ.
- ຈີກຖົງປະລາສະຕິກ (PE) ອອກ ແລະ ຮັກສາເບົ້າບໍ່ໃຫ້ແຕກ.
- ວາງເບົ້າຊາລົງຕາມທິດທີ່ສະດວກແລ້ວຖົມດິນ, ຢັດດິນອ້ອມເບົ້າໃຫ້ ແໜ້ນ.
- ເອົາດິນຊັ້ນໜ້າທີ່ຜຸຜຸ່ຍ ປົກທາງໜ້າໃຫ້ໜາ 1 ຊມ.
- ພາຍຫຼັງປູກແລ້ວຕ້ອງຫຼົກຫຍ້າອອກຫ່າງແຖວຕົ້ນຊາກວ້າງ 40 ຊມ, ຖ້າມີເງື່ອນ ໄຂກໍ່ຄວນຫົດນ້ຳ.



ການປູກເບັ້ຍຊາ ຕາມແຖວປູກ

*ຂໍ້ຄວນເອົາໃຈໃສ່*

- ເບົ້າຊາທີ່ຈະນຳໄປປູກບໍ່ຄວນແຫ້ງເກີນໄປເພາະເບົ້າຈະແຕກງ່າຍ.
- ຖ້າເບົ້າປຽກເກີນໄປຈະເຮັດໃຫ້ເບົ້າຮັດແໜ້ນ ເວລາປູກເຮັດໃຫ້ຮາກຫົດເຂົ້າກັນ ເຮັດໃຫ້ເບັ້ຍຊາຕາຍ.
- ເວລາປູກຄວນຈັດເບັ້ຍໄປລວງດຽວກັນ ເພື່ອສະດວກໃນການບົວລະບັດຮັກສາ.
- ເວລາຖົມຂຸມເບັ້ຍຊາ ບໍ່ຄວນຢຽບແໜ້ນເກີນໄປ ຈະເຮັດໃຫ້ເບົ້າຊາຮັດຕິດກັນ ຈະເຮັດໃຫ້ຮາກຊາຂາດ ແລະ ຕາຍໃນທີ່ສຸດ.

## VI. ການບົວລະບັດຮັກສາ

### 1. ການບົວລະບັດ

*ກ. ປູກສ້າມ (ປູກສ້ອມ)*

- ປະລິມານຕົ້ນຊາປູກສ້າມ: ຈຳນວນຕົ້ນຊາປູກສ້າມໃນແຕ່ລະປີແມ່ນ 10% ຂອງຈຳນວນເບັ້ຍຊາທີ່ປູກທັງໝົດ (ເບັ້ຍຊາຈຳນວນນີ້ຕ້ອງກະກຽມໃນຊ່ວງລະດູການຜະລິດເບັ້ຍ).

- ຂະໜາດຂອງຂຸມ 30 ຊຕມ x 30 ຊຕມ.
- ການໃສ່ຝຸ່ນ: ຝຸ່ນຄອກ 0,5-1 ກິໂລ ຕໍ່ 1 ຂຸມ.
- ວິທີປູກ: ເອົາຖົງຢາງອອກຈາກເບົ້າ, ເອົາເບົ້າລົງຂຸມ, ຖົມດິນ, ຢັດດິນອ້ອມເບົ້າ, ເອົາດິນປົກປາກຂຸມບາງໆ ແລ້ວເອົາຫຍ້າແຫ້ງປົກຄຸມເງົ້າຕົ້ນເພື່ອຮັກສາຄວາມຊຸ່ມ.
- ລະດູການປູກສ້າມ: ລະດູປູກສ້າມແມ່ນເດືອນ 8-9, ເວລາປູກໃຫ້ເລືອກເອົາມື້ທີ່ມີອາກາດຊຸ່ມເຢັນ ແລະ ດິນຕ້ອງຊຸ່ມຊື່ນພຽງພໍຖ້າສວນຊາມີອາຍຸ 2-3 ປີ, ເບ້ຍຊາທີ່ຈະປູກສ້າມຈະຕ້ອງເປັນເບ້ຍໃຫຍ່.

*ວິທີປູກສ້າມດ້ວຍເບ້ຍໃຫຍ່ (ເບົ້າໃຫຍ່ ຫຼື ເບົ້າທີ່ປ່ຽນໃໝ່)*

- ຂະໜາດຂອງເບົ້າແມ່ນ 18 ຊຕມ x 25 ຊຕມ.
- ອັດຕາສ່ວນດິນໃນເບົ້າ: ດິນ 3 ສ່ວນ, ຝຸ່ນ 1 ສ່ວນ (0.3 ກລ ຝຸ່ນຄອກ + 20 ກຼາມ ($P_2O_5$)/ 1 ເບົ້າ.
- ຄັດເລືອກແນວພັນຊາຊະນິດດຽວກັນ (ອາຍຸ 9 -10 ເດືອນ), ປັກຊຳໃສ່ເບົ້າໃຫຍ່.
- ໄລຍະເວລາເພາະລ້ຽງຢູ່ສວນກ້າ: ໄລຍະບົວລະບັດຮັກສາເບົ້າຊາຢູ່ສວນກ້າ(ເບົ້າໃຫຍ່), 7-8 ເດືອນ (ລວມໄລຍະເພາະພັນລ້ຽງຢູ່ສວນກ້າ 16-18 ເດືອນ).
- ມາດຕະຖານຂອງເບ້ຍຊາ: ລວງສູງ 35-40 ຊຕມ ມີໃບ 17-18 ໃບ, ມີຕາຍອດ 1-2 ຕາ, ໜ້າຕ້າງລຳຕົ້ນ 0.5 ຊຕມ.
- ວິທີປູກສ້າມແມ່ນຄືກັນກັບປູກສ້າມ (ຢູ່ຂໍ້ ກ).

*ຂ. ການເສຍຫຍ້າຂ້າຮຸ່ນ*

- ພາຍຫຼັງເສຍຫຍ້າ, ຕ້ອງປົກຄຸມໂຄນຕົ້ນດ້ວຍເສດຫຍ້າ, ພືດຂຽວ (ຕົ້ນໄມ້ຝຸ່ນຂຽວ) ແນ່ໃສ່ຄຸມຫຍ້າ, ຕ້ານການກັດເຊາະຂອງນ້ຳເວລາຝົນຕົກແຮງ. ຕ້ອງອະນາໄມຫຍ້າສວນຊາໃຫ້ກ້ຽງ ແລະ ເຮັດໃນຊ່ວງ ເດືອນ 1-2 ແລະ ເດືອນ 7-8.

• ໃນປີນຶ່ງຕ້ອງເສຍຫຍ້າອ້ອມໂຄນຕົ້ນ ສອງຟາກຂ້າງ 2-3 ເທື່ອ ກວ້າງ 30-40 ຊຕມ. ໃນຊ່ວງຕົ້ນຊາອາຍຸ 1 ປີ, ການຫຼົກຫຍ້າດ້ວຍມືທີ່ໂຄນຕົ້ນຊາ ແມ່ນວິທີເໝາະສົມທີ່ສຸດ.

| ກິດຈະກໍາປູກຊາເພື່ອເປັນສິນຄ້າ |
| --- |
| • ໃນຊ່ວງລະດູໜາວ: ຕ້ອງເສຍຫຍ້າໃຫ້ກ້ຽງ, ໄຖຫວ່າງກາງສອງແຖວ ຫຼື ພວນດິນ ເລິກ 10 ຊຕມ, ໃສ່ຝຸ່ນຄອກ, ປັກກິ່ງງ່າ ແລະ ໃບຊາພາຍຫຼັງຕັດແຕ່ງຊົງພຸ່ມ.<br>• ໃນຊ່ວງລະດູແລ້ງ: ຂຸດຕໍໄມ້ອອກ, ຖາງຫຍ້າ, ວາງແຖວ.<br>• ສວນທີ່ໄດ້ຮັບການເອົາຫຍ້າປົກຄຸມດີໃນລະດູໜາວຈະຫຼຸດຜ່ອນການເສັຍຫຍ້າ ໃນລະດູແລ້ງ. |
| ສວນຊາເພື່ອເອົາກິ່ງປັກຊໍາ |
| • ໃນຊ່ວງລະດູໜາວ: ຕ້ອງເສຍຫຍ້າອ້ອມໂຄນຕົ້ນໃຫ້ກ້ຽງ, ໄຖລະຫວ່າງກາງແຖວ ແລະ ໃສ່ຝຸ່ນ ແລະ ຖາງຫຍ້າອ້ອມສວນ. |



ການເສຍຫຍ້າ ແລະ ການເອົາຊາກພືດຄຸມດິນ

## VII. ເຕັກນິກການຕັດແຕ່ງຊົງພຸ່ມ

### 1. ການຕັດແຕ່ງຊົງພຸ່ມ

ການຕັດແຕ່ງຊົງພຸ່ມຈະຕັດແຕ່ງໄດ້ເມື່ອເວລາຕົ້ນຊາຢູ່ໃນສວນປະມານ 70% ມີລວງສູງ 65-70 ຊຕມ ແລະ ໜ້າຕ້າງໂຄນຕົ້ນ 1 ຊຕມ ຂຶ້ນໄປ.

| ການຕັດແຕ່ງຄັ້ງທີ 1 | ການຕັດແຕ່ງຄັ້ງທີ 2 |
|---|---|
| ການຕັດແຕ່ງຄັ້ງທີນຶ່ງ ເລີ້ມຕົ້ນເມື່ອເວລາຕົ້ນຊາມີອາຍຸ 2 ປີ ໂດຍການຕັດລຳຕົ້ນໃຫ້ສູງຈາກໜ້າດິນ 20-25 ຊຕມ, ຕັດງ່າຂ້າງສູງຈາກໜ້າດິນ 35-45 ຊຕມ. | ການຕັດແຕ່ງຊົງພຸ່ມຄັ້ງທີສອງ ເລີ້ມຕົ້ນເມື່ອເວລາຕົ້ນຊາ ມີອາຍຸ 3 ປີ ຕັດລຳຕົ້ນສູງຈາກໜ້າດິນ 30-35 ຊຕມ, ຕັດງ່າຂ້າງສູງຈາກໜ້າດິນ 40-45 ຊຕມ. |

### 2. ການຕັດແຕ່ງປັບປຸງເຮືອນຍອດ

ການຕັດແຕ່ງປັບປຸງເຮືອນຍອດ ແມ່ນໃຫ້ເລີ້ມຕົ້ນເມື່ອເວລາຕົ້ນຊາມີອາຍຸ 4 ປີ. ໃນຊ່ວງ 2 ປີທຳອິດຂອງການຕັດແຕ່ງ, ຕັດຍັບຂຶ້ນຄັ້ງລະ 5 ຊຕມ ຂອງຮອຍຕັດເກົ່າ. ຫຼັງຈາກນັ້ນແຕ່ລະປີຕັດ ຍັບຂຶ້ນຕື່ມ 3 ຊຕມ ສູງຈາກຮອຍຕັດເກົ່າ. ເມື່ອເວລາຮອດຮອບສຸດທ້າຍສູງເຖິງ 70 ຊຕມ. ຈາກໜ້າດິນ, ແຕ່ລະປີຈະຕັດຍັບຂຶ້ນອີກ 1 ຊຕມ ຈາກຮອຍຕັດເກົ່າ.

*ຂໍ້ຄວນເອົາໃຈໃສ່*

ຫ້າມເດັດຂາດບໍ່ໃຫ້ຕັດງ່າຕາອອກທາງຂ້າງ, ທັງນີ້ເພື່ອຮັບປະກັນ ລະດັບປົກຫຸ້ມຂອງເຮືອນຍອດ. ຕໍ່ກັບສວນຊາ ທີ່ມີການຈະເລີນເຕີບໂຕຊ້າ, ເຮືອນຍອດບາງອາດຈະໃຊ້ການຕັດແຕ່ງແບບບາປີຕັດ, ປີໜຶ່ງອາດຕັດແຕ່ງປັບປຸງເຮືອນຍອດຄືກັບທີ່ກ່າວມາຂ້າງເທິງ, ປີຕໍ່ໄປຕັດແຕ່ງ ຊ້ອມເຮືອນຍອດໂດຍຈະຕັດສະເພາະງ່າຊຽວ.

### 3. ການຕັດແຕ່ງກິ່ງແບບເບົາໆ

ພາຍຫຼັງຕັດແຕ່ງປັບປຸງເຮືອນຍອດມາໄດ້ຫຼາຍປີແລ້ວ, ຮອຍຕັດແຕ່ງສູງກວ່າ 90 ຊຕມ (ສູງຈາກໜ້າດິນ), ງ່າຕົ້ນຊາຄົດງໍ, ເປັນປູດ ແລະ ເປັນຕາ, ຕົ້ນຊາອອກຊໍ່ຍອດ

ນ້ອຍໃຫ້ຜົນຜະລິດຕ່ຳ. ຮອດໄລຍະນີ້ຄວນຕັດແຕ່ງກິ່ງໃຫ້ຕົ້ນຊາໃຫ້ຕ່ຳລົງ 60-65 ຊຕມ ຫຼື ວ່າຕົ້ນຊາຍັງໃຫ້ຜົນຜະລິດສູງຢູ່, ແຕ່ຕົ້ນຊາສູງໂພດກໍ່ຄວນຕັດແຕ່ງໃຫ້ເຕ້ຍລົງ ໃຫ້ສູງຈາກໜ້າດິນ 70-75 ຊຕມ ເພື່ອສະດວກໃນການເກັບໃບຊາ.

### 4. ການຕັດແຕ່ງໃຫ້ຕົ້ນຊາເຕ້ຍລົງ

ສວນປູກຊາທີ່ໄດ້ທຳການຕັດແຕ່ງກິ່ງໃຫ້ເຕ້ຍລົງຕິດຕໍ່ກັນຫຼາຍປີ, ຈະມີງ່າຄົດງໍ, ເປັນປູດເປັນເປົ້າ, ຕົ້ນຊາມີການຈະເລີນເຕີບໂຕຊ້າ, ໃຫ້ຜົນຜະລິດລຶດລົງຢ່າງຈະແຈ້ງ. ຕ້ອງມີການຕັດແຕ່ງໃຫ້ຕົ້ນຊາເຕ້ຍລົງ, ສູງຈາກໜ້າດິນ 40-45 ຊຕມ.

### 5. ການຕັດແຕ່ງໃຫ້ຕົ້ນຊາໜຸ່ມຄືນ

ສວນຊາທີ່ໄດ້ຜ່ານການຕັດແຕ່ງປັບປຸງກິ່ງງ່າມາຫຼາຍຄັ້ງຕົ້ນຊາມີອາຍຸແກ່ຜົນຜະລິດລຶດລົງຢ່າງຈະແຈ້ງ, ຕ້ອງຕັດແຕ່ງໃຫ້ຕົ້ນຊາໜຸ່ມຄືນ, ການຕັດແຕ່ງໃຫ້ໜຸ່ມຄືນແມ່ນຕັດສູງຈາກໜ້າດິນ10-15 ຊຕມ.

### 6. ໄລຍະເວລາຕັດແຕ່ງ

ການຕັດແຕ່ງແມ່ນເລີ້ມແຕ່ກາງ ເດືອນທັນວາຫາ ເດືອນມັງກອນ. ໃນເຂດທີ່ມີນ້ຳໝອກກ້າມຄວນຕັດແຕ່ງຊ້າແດ່. ພາຍຫຼັງນ້ຳໝອກກ້າມຕົກ. ຄວນຕັດແຕ່ງປັບປຸງກິ່ງງ່າກ່ອນ, ຈາກນັ້ນ. ຈຶ່ງຕັດແຕ່ງປັບປຸງຍອດ. ຕັດແຕ່ງຊົງພຸ່ມສວນຊາໜຸ່ມກ່ອນ, ຈາກນັ້ນ. ຈຶ່ງຕັດແຕ່ງສວນຊາທີ່ຈະເລີນເຕັມທີ່ຕາມຫຼັງ.

### 7. ວິທີຕັດແຕ່ງສວນຊາ ແລະ ອຸປະກອນການຕັດແຕ່ງ

- ການຕັດແຕ່ງເຮືອນຍອດແບບພຽງ. ຄວນຕັດໃຫ້ງ່ຽງຕາມເປີ້ນພູ, ການຕັດແຕ່ງຄວນຫຼີກເວັ້ນບໍ່ໃຫ້ທຳລາຍເປືອກ ແລະ ກິ່ງງ່າຂອງຕົ້ນຊາ.
- ອຸປະກອນທີ່ນຳໃຊ້ໃນການຕັດແຕ່ງ ແມ່ນນຳໃຊ້ມີດຕັດ (cutter).
- ການຕັດແຕ່ງປັບປຸງກິ່ງງ່າຕັດແຕ່ງຕົ້ນໃຫ້ເຕ້ລົງ ແລະ ຕັດແຕ່ງຊົງພຸ່ມ (cutter).
- ການຕັດແຕ່ງໃຫ້ໜຸ່ມຄືນ, ການຕັດແຕ່ງງ່າໃຫຍ່ແມ່ນໃຊ້ເລື່ອຍ. ສຳລັບແນວພັນຊາທີ່ແຕກກິ່ງງ່າຫຼາຍ ອັດຕາຄວາມໜາແໜ້ນຂອງກິ່ງງ່າສູງ ມີການຈະເລີນເຕີບໂຕສະໝ່ຳສະເໝີອາດສາມາດນຳໃຊ້ເຄື່ອງຈັກຕັດເພື່ອຍົກປະສິດທິພາບຂອງງານ.

## VIII. ເຕັກນິກການເກັບໃບຊາ

### 1. ຫຼັກການເກັບໃບຊາ

- ເກັບເອົາແຕ່ສ່ວນຍອດ ແລະ ໃບ, ແຕ່ໃບທີ່ຍັງເຫຼືອຕ້ອງຮັບປະກັນພື້ນທີ່ໃບຊາດຸ່ນດ່ຽງກັບຄວາມເໝາະສົມຕໍ່ການຈະເລີນເຕີບໂຕ.

- ການເກັບໃບຊາ ຕ້ອງອີງຕາມແນວພັນ, ຄວາມສາມາດຜະລິດຍອດ ແລະ ຄຸນນະພາບ (ບໍ່ເກັບໃບແກ່ເກີນໄປ, ບໍ່ເກັບໃບອ່ອນເກີນໄປ).

### 2. ວິທີເກັບໃບຊາ

ກ. ເຕັກນິກພື້ນຖານທີ່ຈຳເປັນໃນການເກັບໃບຊາ (ການເກັບໃບຊາແບບປັບປຸງຊົງພຸ່ມ)

| ປະເພດສວນຊາ | ວິທີການເກັບ |
|---|---|
| ສວນຊາອາຍຸ 1 ປີ | • ເລີ້ມເກັບແຕ່ເດືອນຕຸລາ, ເດັດເອົາຍອດຂອງຕົ້ນທີ່ມີລວງສູງ 60 ຊຕມ ຂຶ້ນໄປ. |
| *ສວນຊາອາຍຸ 2 ປີ* | • ເກັບເອົາຍອດບັນດາຕົ້ນຊາທີ່ຈະເລີນເຕີບໂຕດີຫ່າງຈາກໜ້າ ດິນ 50 ຊຕມ ຂຶ້ນໄປ |
| *ສວນຊາພາຍຫຼັງຕັດແຕ່ງຊົງພຸ່ມຄັ້ງທີໜຶ່ງ* | • ເກັບໃບຊາຄັ້ງທຳອິດແມ່ນຫ່າງຈາກໜ້າດິນ 40-45 ຊຕມ ຂຶ້ນໄປ, ສ້າງເປັນໜ້າພຽງງ່ຽງຕາມເປີ້ນພູ<br>• ເກັບໃບຊາຄັ້ງທີສອງແມ່ນເດັດຍອດ ແລະ ໃບສຳຮອງ 2 ໃບ. |
| *ສວນຊາພາຍຫຼັງຕັດແຕ່ງຄັ້ງທີສອງ* | • ເກັບໃບຊາຄັ້ງທຳອິດແມ່ນສູງກວ່າການຕັດແຕ່ງຄັ້ງທຳອິດ 25-30 ຊຕມ, ເກັບໃບຊາຄັ້ງທີສອງແມ່ນເກັບທຳມະດາ,ປົກກະຕິ ແລ້ວຄ້າຍຄຽງກັບຕັດແຕ່ງຊົງພຸ່ມຄັ້ງທຳອິດ. |




ການຈັດປະເພດຍອດຊາ

*ຂ. ເກັບໃບຊາເພື່ອທຸລະກິດ*

- ເກັບຊໍ່ຍອດ (ເອົາ 3 ໃບກັບຍອດ), ໃນເມື່ອພຸ່ມເຮືອນຍອດມີຊໍ່ຍອດທີ່ໄດ້ມາດຕະຖານ 30% ແມ່ນເກັບເອົາທັງຍອດອ່ອນ.

- ໄລຍະລະດູການເກັບຊາເດືອນ 3-4: ການເກັບໃບຊາບໍ່ຄວນເກັບໝົດຕ້ອງປະໃບແກ່ໄວ້ 2 ໃບ ແລະ ໃບແກ່ 1 ໃບ. ເພື່ອສ້າງພຸ່ມໃຫ້ພຽງ, ຍອດໃດທີ່ສູງກວ່າພຸ່ມແມ່ນເດັດເອົາຍອດຈີນຈຳໃບແກ່.

- ໄລຍະລະດູການເກັບຊາເດືອນ 5-10: ການເກັບໃບຊາບໍ່ເກັບໝົດຕ້ອງປະໃບໄວ້ 1 ໃບ ແລະ ໃບອ່ອນ 1 ໃບ. ເພື່ອຂະຫຍາຍພຸ່ມ, ສ່ວນຍອດທີ່ສູງກວ່າພຸ່ມແມ່ນເດັດເອົາຍອດຈີນຈຳໃບແກ່.

- ໄລຍະລະດູການເກັບຊາ ເດືອນ 11 ການເກັບໃບຊາບໍ່ເກັບໝົດຕ້ອງປະໃບແກ່ໄວ້ 1 ໃບ ແລະ ໃບກະຈາ 1 ໃບ ເພື່ອຂະຫຍາຍພຸ່ມ, ສ່ວນຍອດທີ່ສູງກວ່າພຸ່ມແມ່ນເດັດເອົາຍອດຈີນຈຳໃບແກ່.

*ຄ. ການເກັບໃບແບບປະໄວ້ຕາມວິທີການຕັດແຕ່ງຄື:*

- ຕັດແຕ່ງສູງຈາກໜ້າດິນ 60-65 ຊຕມ ເກັບສູງຈາກຮອຍຕັດ 15 ຊຕມ.

- ຕັດແຕ່ງສູງຈາກໜ້າດິນ 65-75 ຊຕມ ເກັບສູງຈາກຮອຍຕັດ

10 ຊຕມ.

- ຕັດແຕ່ງສູງຈາກໜ້າດິນ 75 ຊຕມ ເກັບສູງຈາກຮອຍຕັດ 7 -10 ຊຕມ.

- ຕັດແຕ່ງໃຫ້ໜຸ່ມຄືນ, ຕັດແຕ່ງປັບປຸງຍອດເກັບໃບຊາແບບ ປັບປຸງຊີງພຸ່ມ.

## IX. ເຕັກນິກການໃສ່ຝຸ່ນ

### 1. ການໃສ່ຝຸ່ນສວນຊາປູກໃໝ່ (ສວນຊາປູກສ້າງເບື້ອງຕົ້ນ)

*ກ. ຫຼັກການໃສ່ຝຸ່ນ*

- ໃສ່ຝຸ່ນຕາມອາຍຸຕົ້ນຊາ ແລະ ຕາມຜົນຜະລິດ, ຕົ້ນຊາຍັງນ້ອຍໃສ່ຝຸ່ນໜ້ອຍ, ຕົ້ນຊາໃຫຍ່ເຕັມທີ່ຜົນຜະລິດສູງໃສ່ຝຸ່ນຫຼາຍ.

- ການໃສ່ຝຸ່ນຄວນຄຳນຶງເຖິງປັດໄຈຄວາມດຸ່ນດ່ຽງທາດ NPK ໃນດິນ, ໃສ່ຝຸ່ນເສີມທີ່ພືດຕ້ອງການທາດຕ່າງໆ ພືດຕ້ອງການປານກາງ, ພືດຕ້ອງການໜ້ອຍໃນເມື່ອຈຳເປັນ.

- ການໃສ່ຝຸ່ນທີ່ໃຫ້ຜົນ ແມ່ນຄວນໃສ່ຝຸ່ນຖືກວິທີ ແລະ ຖືກລະດູການ, ໃສ່ຖືກເປົ້າໝາຍ, ໃສ່ຝຸ່ນຮອງພື້ນ, ໃສ່ຝຸ່ນເລັ່ງທັນເວລາ.

- ການໃສ່ຝຸ່ນແມ່ນອີງຕາມເງື່ອນໄຂຂອງດິນ, ອາກາດເປັນຕົວຕັດສິນອັດຕາສ່ວນຝຸ່ນທີ່ຈະໃສ່.

*ຂ. ໃສ່ຝຸ່ນຮອງພື້ນສວນປູກໃໝ່*

- ອັດຕາສ່ວນຝຸ່ນອິນຊີ 20-30 ໂຕນ/ເຮັກຕາ.

- ຝຸ່ນ $P_2O_5$ 500-600 ກິໂລ/ເຮັກຕາ.

- ວິທີໃສ່ຝຸ່ນ:ຫວ່ານຝຸ່ນໃຫ້ສະເໝີຕາມຮ່ອງປູກປະສົມຝຸ່ນກັບດິນໃຫ້ເຂົ້າກັນກ່ອນການປູກປະມານເຄິ່ງເດືອນຫາໜຶ່ງເດືອນ.

ຄ. *ການໃສ່ຝຸ່ນເລັ້ງສວນຊາແມ່ນສິ່ງຈຳເປັນ, ພື້ນຖານ (2-3 ປີ ພາຍຫຼັງປູກ).* ດັ່ງຕາຕະລາງລຸ່ມນີ້:

1. ການໃສ່ຝຸ່ນເລັ່ງສວນຊາໃນໄລຍະ 3 ປີ ທຳອິດ.

| ຊະນິດຊາ / ອາຍຸຊາ | ຊະນິດຝຸ່ນ | ອັດຕາສ່ວນ (Kg/ha) | ຈຳນວນເທື່ອໃສ່ (ຕໍ່ຄັ້ງ) | ເວລາໃສ່ (ເດືອນ) | ວິທີໃສ່ຝຸ່ນ |
|---|---|---|---|---|---|
| ອາຍຸ 1 ປີ | N | 40 | 2 | 2-3, 6-7 | ປະສົມໃຫ້ສະເໝີ, ໃສ່ຝຸ່ນເລິກ 6 - 8 ຊຕມ ຫ່າງຈາກຕົ້ນ 25-30 ຊຕມ ຖົມດິນໃຫ້ແຈບ |
| | $P_2O_5$ | 30 | 1 | 2-3 | |
| | $K_2O$ | 30 | 1 | 2-3 | |
| ອາຍຸ 2 ປີ | N | 60 | 2 | 2-3, 6-7 | ປະສົມໃຫ້ສະເໝີ, ໃສ່ຝຸ່ນເລິກ 6 - 8 ຊຕມ ຫ່າງຈາກຕົ້ນ 25-30 ຊຕມ ຖົມດິນໃຫ້ ແຈບ |
| | $P_2O_5$ | 30 | 1 | 2-3 | |
| | $K_2O$ | 40 | 1 | 2-3 | |
| ຕັດແຕ່ງຊົງພຸ່ມຄັ້ງທີ 1 (ອາຍຸ 2 ປີ) | ຝຸ່ນອິນຊີ | 15,000 - 20,000 | 1 | 11-12 | ປະສົມໃຫ້ສະເໝີ, ໃສ່ຝຸ່ນເລິກ 15-20 ຊຕມ ຫ່າງຈາກຕົ້ນ 30-40 ຊຕມ ຖົມດິນໃຫ້ແຈບ |
| | $P_2O_5$ | 100 | 1 | 11-12 | |
| ອາຍຸ 3 ປີ | N | 80 | 2 | 2-3, 6-7 | ຄົນໃຫ້ສະເໝີ, ໃສ່ຝຸ່ນເລິກ 6-8 ຊຕມ ຫ່າງຈາກຕົ້ນ30-40 ຊຕມ ຖົມດິນໃຫ້ແຈບ |
| | $P_2O_5$ | 40 | 1 | 2-3 | |
| | $K_2O$ | 60 | 1 | 2-3,6-7 | |

2. ການໃສ່ຝຸ່ນສວນຊາ ແນວພັນສຳລັບເອົາກິ່ງປັກຊຳ: ເບິ່ງຕາມຕາຕະລາງລຸ່ມນີ້:

| ຊະນິດຝຸ່ນ | ອັດຕາສ່ວນ Kg/ha | ຈຳນວນເທື່ອໃສ່ | ເວລາໃສ່ (ເດືອນ) | ວິທີໃສ່ຝຸ່ນ |
|---|---|---|---|---|
| ຝຸ່ນອິນຊີ | 25,000<br>30,000 | 1 | 12-1 | ປະສົມໃຫ້ສະເໝີ, ໃສ່ຝຸ່ນຕາມວ່າງຮ່ອງ, ເລິກ 15-20 ຊຕມ ຖົມດິນໃຫ້ແຈບ. |
| N | 200 | 1 | 2-6 | ປະສົມໃຫ້ສະເໝີ, ໃສ່ຝຸ່ນວ່າງແຖວເລິກ 6-8 ຊຕມ ຖົມດິນໃຫ້ແຈບ N 60-4%, $P_2O_5$100%, $K_2O$60-40% |
| $P_2O_5$ | 300 | 1 | 12-1 | |
| $K_2O$ | 200 | 2 | 2-6 | |

3. ການໃສ່ຝຸ່ນສວນຊາສຳລັບຜະລິດເປັນສິນຄ້າ.

| ຊະນິດຊາ | ຊະນິດຝຸ່ນ | ອັດຕາສ່ວນ Kg/ha | ຈຳນວນເທື່ອໃສ່ | ເວລາໃສ່ (ເດືອນ) | ວິທີໃສ່ຝຸ່ນ |
|---|---|---|---|---|---|
| ຊາເພື່ອຜະລິດເປັນສິນຄ້າ 3 ປີ/ເທື່ອ | ຝຸ່ນອິນຊີ | 25,000<br>30,000 | 1 | 12-1 | ປະສົມໃຫ້ສະເໝີ, ໃສ່ຝຸ່ນຕາມຫວ່າງແຖວ, ເລິກ 15-20 ຊຕມຖົມດິນໃຫ້ແຈບ |
| | $P_2O_5$ | 100 | 1 | 12-1 | |
| ຜົນຜະລິດຕ່ຳກວ່າ 600 Kg/ha | N | 100 -120 | 3-4 | | ປະສົມໃຫ້ສະເໝີ,ໃສ່ຝຸ່ນຕາມຫວ່າງແຖວ, ເລິກ 6-8 ຊຕມຖົມດິນໃຫ້ ແຖວ, ໃສ່: 40-20-30 -10% ຫຼື N 40 -30 30%, $P_2O_5$ 100%, $K_2O$ 60 40% |
| | $P_2O5$ | 40-60 | 1 | | |
| | $K_2O$ | 60-80 | 2 | | |

ຕໍ່ຕາງຕະລາງ 3 ການໃສ່ຝຸ່ນສວນຊາສຳລັບຜະລິດເປັນສິນຄ້າ.

| | | | | | |
|---|---|---|---|---|---|
| ຜົນຜະລິດໄດ້ 600 Kg/ha, ແຕ່ຕ່ຳກວ່າ 800 Kg/ha | N | 120-180 | 3-4 | 2-4 ແລະ 6-8 | ປະສົມໃຫ້ສະເໝີ, ໃສ່ຝຸ່ນຕາມວ່າງແຖວ, ເລິກ 6-8 ຊຕມ ຖົມດິນໃຫ້ ແຈບ, ໃສ່:40-20-30 -10% ຫຼື N 40-30-30%. $P_2O_5$ 100%, $K_2O$ 60-40% |
| | $P_2O_5$ | 60-100 | 1 | 2 | |
| | $K_2O$ | 80-120 | 2 | 2 | |
| ຜົນຜະລິດໄດ້ 1,200Kg/ha ຂຶ້ນໄປ | N | 300-600 | 3-5 | 1,3,5,7,9 | ປະສົມໃຫ້ສະເໝີ, ໃສ່ຝຸ່ນຕາມວ່າງແຖວ, ເລິກ 6-8 ຊຕມຖົມດິນໃຫ້ແຈບ, ໃສ່: 30-20-30-10% ຫຼື N 20-30-20% $P_2O_5$ 100%, $K_2O$ 60-30-10% |
| | $P_2O_5$ | 160-200 | 1 | 1 | |
| | $K_2O$ | 200-300 | 2-3 | 1-5-9 | |

# ເຕັກນິກການປັກຊຳກິ່ງຊາ

# ເຕັກນິກການປັກຊຳກິ່ງຊາ

## 1. ມາດຕະຖານຂອງສວນແນວພັນ

ສວນແນວພັນຊາ ແມ່ນສວນຊາທີ່ປູກ ເພື່ອເອົາກິ່ງມາປັກຊຳ. ສວນແນວພັນຕ້ອງປູກດ້ວຍກິ່ງພັນ (ບໍ່ແມ່ນປູກດ້ວຍແກ່ນ) ທີ່ໄດ້ຜ່ານການຄັດເລືອກ ແລະ ເປັນແນວພັນຊະນິດດຽວກັນ (ລ້ວນ). ສວນແນວພັນຈະຕ້ອງໄດ້ເອົາໃຈໃສ່ດູແລຮັກສາແຕ່ເລີ້ມຕົ້ນປູກເປັນຕົ້ນມາ. ພິເສດແມ່ນລະບົບການໃສ່ຝຸ່ນ. ນັບແຕ່ເລີ້ມປູກຕ້ອງໄດ້ໃສ່ຝຸ່ນອິນຊີຮອງພື້ນ 30-40 ໂຕນ/ເຮັກຕາ, ສົມທົບກັບໃສ່ຝຸ່ນຊູບເປີຟົດສະຟັດ ($P_2O_5$) 600-800 ກິໂລ/ເຮັກຕາ. ນອກນັ້ນໃນແຕ່ລະປີຕ້ອງໃສ່ຝຸ່ນ NPK ເພີ້ມ, ສຳລັບອັດຕາສ່ວນໃນການໃສ່ໃຫ້ເໝາະສົມ ແມ່ນອີງຕາມຄວາມອຸດົມສົມບູນ ຂອງແຕ່ລະຊະນິດດິນ. ໃນໄລຍະການບົວລະບັດຮັກສາ ຂໍ້ທີ່ຄວນເອົາໃຈໃສ່ແມ່ນການເສຍຫຍ້າຂ້າຮຸ່ນເປັນປະຈຳ, ປາບສັດຕູພືດທີ່ມາທຳລາຍໃຫ້ທັນກັບເວລາ, ຕັດແຕ່ງຊົງພຸ່ມໃຫ້ແທດເໝາະ ເພື່ອຮັບປະກັນລະດັບຄວາມໜາແໜ້ນກິ່ງງ່າໃຫ້ສະໝ່ຳສະເໝີ.

## 2. ມາດຕະຖານກິ່ງຊາທີ່ຈະປັກຊຳ

ໄລຍະເອົາກິ່ງປັກຊຳທີ່ເໝາະສົມແມ່ນ 90-105 ວັນ ຄິດໄລ່ແຕ່ມື້ ບໍ່ເກັບຍອດຊາ, ເສັ້ນຜ່າສູນກາງຂອງກິ່ງປັກຊຳແມ່ນ 2,5-4 ມມ, ເນື້ອທີ່ລວມຂອງໃບແຕ່ 20-25 ຊມ$^2$ ຖ້າເນື້ອທີ່ລວມຂອງໃບຫາກໃຫຍ່ກວ່າ ຈະຕ້ອງໄດ້ຕັດອອກຈຳນວນໜຶ່ງ ເພື່ອໃຫ້ແທດເໝາະ.

ກ່ອນຕັດກິ່ງມາປັກຊຳຈະຕ້ອງໄດ້ເດັດຍອດກ່ອນ 10-20 ວັນ ການເດັດຍອດແມ່ນອີງຕາມລະດູການ.

ລະດູການລ້ຽງກິ່ງປັກຊຳມີ 2 ລະດູການຕົ້ນຕໍ ຄື: ລະດູໜາວແຕ່ເດືອນພະຈິກຫາເດືອນກຸມພາ, ລະດູຮ້ອນແຕ່ ເດືອນມິຖຸນາ ຫາ ເດືອນກໍລະກົດຂອງແຕ່ລະປີ.

## 3. ຫຼັກການຂອງເຕັກນິກການປັກຊຳ

ການຄັດເລືອກພື້ນທີ່ເພື່ອສ້າງສວນກ້າ: ຄັດເລືອກພື້ນທີ່ພຽງ ຫຼື ຄ້ອຍຊັນເລັກນ້ອຍ, ໃກ້ແຫຼ່ງນ້ຳມີລະດັບນ້ຳໃຕ້ດິນເລິກກວ່າ 1 ແມັດເປັນບ່ອນລະບາຍນ້ຳໄດ້ດີເວລາມີຝົນຕົກ.

**ອອກແບບໜານ, ຄັດເລືອກດິນ ແລະ ຖົງຮ່າຍເບົ້າ**

ຂະໜາດໜານກ້າກວ້າງ 1 ມ -1.2 ມ, ຍາວແຕ່ 15 ມ-20 ມ ໄລຍະຫ່າງລະຫວ່າງໜານແມ່ນກວ້າງ 30-40 ມ, ເນື້ອທີ່ສວນກ້າບໍ່ຄວນກວ້າງກວ່າ 500 $ມ^2$.

ດິນສຳລັບຮ່າຍເບົ້າຄວນມີລະດັບຄວາມເປັນກົດ (PH 4.5-5.5) ອົງປະກອບຂອງດິນຄວນຢູ່ໃນລະດັບກາງ ຫຼື ເບົາ. ດິນທີ່ຈະນຳມາຮ່າຍເບົ້າຕ້ອງແມ່ນດິນທີ່ລອກເອົາດິນຊັ້ນໜ້າແຕ່ 10-15 ຊຕມ ອອກ. ຖືກທຸບໃຫ້ມຸ່ນແລ້ວນຳມາຮ່ອນ, ເມັດດິນມີຂະໜາດເສັ້ນຜ່າສູນກາງບໍ່ໃຫ້ເກີນ 0,5 ຊຕມ.

ເບົ້າຊຳກິ່ງແມ່ນໃຊ້ຖົງຢາງ (PE) ຂະໜາດ 10-12x16-18 ຊຕມ, ເຈາະຮູລະບາຍນ້ຳຢູ່ 1/3 ຂອງພື້ນເບົ້າ 6 ຮູ.

ເຮືອນຮົ່ມມີເສົາເຮັດດ້ວຍໄມ້ໄຜ່ ຫຼື ຊີມັງຂະໜາດຄວາມສູງ 1.8 ມ, ຫຼັງຄາຮົ່ມອາດຈະໃຊ້ຕາໜ່າງດຳ ຫຼື ກະແຕະ, ກ້ານພ້າວແລະອື່ນໆ. ອີງຕາມເງື່ອນໄຂທີ່ມີ.

ການປັກຊຳ: ກ່ອນການປັກຊຳຄວນຫົດນ້ຳໃຫ້ຊຸ່ມ 80-85%, ເອົາກິ່ງຊຳປັກລົງເຄິ່ງກາງເບົ້າໃຫ້ໃບປິ່ນໄປຕາມທິດດຽວກັນ, ໃຫ້ກ້ານໃບເກືອບຕິດກັບໜ້າດິນເບົ້າ, ພາຍຫຼັງປັກຊຳສຳເລັດຕ້ອງພົ່ນນ້ຳດ້ວຍບົ້ງສີດ ເພື່ອເຮັດໃຫ້ກົກກິ່ງປັກຊຳຈັບແໜ້ນ.

## 4. ການຄຸ້ມຄອງ ແລະ ການບົວລະບັດສວນກ້າເບ້ຍ

ພາຍຫຼັງປັກຊຳໄດ້ 10-15 ວັນ, ປາກບາດກິ່ງປັກຊຳເລີ່ມຕິດຈອດກັນ, ອີກ 15-30 ວັນປາກບາດກິ່ງປັກຊຳເລີ່ມເປັນແປ້ວ, ພາຍຫຼັງ 30-60 ວັນ, ກິ່ງປັກຊຳເລີ່ມອອກຮາກ. ຊ່ວງໄລຍະນີ້ ຕ້ອງການເອົາໃຈໃສ່ບົວລະບັດເປັນພິເສດ. ເພາະວ່າໄລຍະນີ້ເປັນໄລຍະຕັດສິນຈຳນວນກິ່ງປັກຊຳ ຈະສາມາດຈະເລີນເຕີບໂຕ ແລະ ມີຊີວິດຢູ່ລອດຂອງເບັ້ຍຊາ.

### 4.1 ການຫົດນ້ຳເພື່ອຮັກສາຄວາມຊຸ່ມ

ອີງຕາມໄລຍະການຈະເລີນເຕີບໂຕຂອງກິ່ງປັກຊຳໃນແຕ່ລະໄລຍະຄວາມຕ້ອງການນ້ຳຂອງກິ່ງປັກຊຳກໍ່ແຕກຕ່າງກັນ.

**ໄລຍະທີໜຶ່ງ**: ໃນຊ່ວງໄລຍະເອົາກິ່ງປັກຊຳລົງເບົ້າ 15-20 ວັນ ກິ່ງປັກຊຳຍັງບໍ່ທັນປົກກະຕິ, ຈາກໃບທີ່ສົດໃສ,ໃບເລີ່ມມີອາການແຫ່ວ, ໃນໄລຍະນີ້ຈຸລັງເລີ່ມມີການແຍກຕົວ, ປາກບາດທີ່ຖືກຕັດເລີ່ມມີການຈອດ, ກຳລັງດູດນ້ຳບໍ່ທັນແຂງແຮງ, ການລະ

ເຫີຍນ້ຳຂອງໃບມີຫຼາຍ. ສະນັ້ນໃນໄລຍະນີ້ກິ່ງປັກຊຳຈະມີໂອກາດແຫ່ວໄດ້ງ່າຍ, ການຫົດນ້ຳຄວນເຮັດປົກກະຕິ, ຕ້ອງການຄວາມຊຸ່ມໃນອາກາດສູງ ເພື່ອຫຼຸດຜ່ອນການລະເຫີຍນ້ຳຂອງໃບ. ສວນກ້າຕ້ອງໄດ້ປົກຄຸມທາງເບື້ອງເທິງ ແລະ ທາງດ້ານຂ້າງ, ເພື່ອໃຫ້ຄວາມຊຸ່ມຂອງອາກາດຢູ່ໃນລະຫວ່າງ 80-90% ແລະ ຄວາມຊຸ່ມຂອງດິນ 80%. ໃນຊ່ວງທີ່ບໍ່ມີຝົນ, ຈຶ່ງຈຳເປັນຕ້ອງໄດ້ຫົດນ້ຳ 1-2 ເທື່ອຕໍ່ວັນ. ຊ່ວງທ້າຍຂອງໄລຍະທີໜຶ່ງໃບຈະມີສີຂຽວສົດໃສ, ຮອຍຕັດໄດ້ຕິດຈອດ.

**ໄລຍະທີສອງ**: ແຕ່ 15-30 ວັນ ກິ່ງທີ່ຊຳໄດ້ເລີ້ມຟື້ນຕົວ, ການດູດນ້ຳຂອງກິ່ງຊຳແຂງແຮງຂຶ້ນ, ໜ້າຂອງໃບເບິ່ງບານມີສີເຫຼື້ອມ ແລະ ສົດໃສຂຶ້ນ ແລະ ເລີ້ມມີຮອຍແປ້ວ. ປະລິມານນ້ຳທີ່ພໍດີແມ່ນ 2 ວັນ ໃຫ້ຫົດ 1 ຄັ້ງ, ແຕ່ລະຄັ້ງ 1.5 ລິດ/ມ$^2$ ຂອງເບົ້າ, ຄວາມຊຸ່ມຂອງດິນລະຫວ່າງ 70-80%. ຫຼັງຈາກ 60 ວັນ ກິ່ງທີ່ປັກຊຳເລີ້ມອອກຮາກ ແລະ ເລີ້ມແຕກຕາຍອດ. ໃນໄລຍະນີ້ແມ່ນເລີ້ມໃຫ້ນ້ຳ ແລະ ຝຸ່ນ. ປະລິມານນ້ຳທີ່ຫົດແມ່ນຂຶ້ນກັບຄວາມຕ້ອງການ ແລະ ລະດັບຄວາມຊຸ່ມໃນແຕ່ໄລຍະການຈະເລີນເຕີບໂຕຂອງເບ້ຍຊາ.

## 4.2 ການໃສ່ຝຸ່ນ

ເບ້ຍຊາສວນໃນກ້າແຕ່ໄລຍະຍັງນ້ອຍຫາໃຫຍ່ ຕ້ອງໄດ້ໃສ່ຝຸ່ນຕາມຄວາມຕ້ອງການໃນແຕ່ລະໄລຍະ. ຈຳນວນຝຸ່ນ NPK ໃນ 1 ມ$^2$ ຂອງເບົ້າແມ່ນ 140 ກຣາມ, ຊຶ່ງປະກອບດ້ວຍທາດ N 60 ກຣາມ (ຖ້າແມ່ນທາດຢູເຣຍແມ່ນຄິດໄລ່ເອົາ ½ ຂອງທາດ N) $P_2O_5$ 30 ກຼາມ, $K_2O$ 50 ກຣາມ. ແຕ່ຊ່ວງໄລຍະກິ່ງປັກຊຳຫາ 2 ເດືອນ ທຳອິດແມ່ນບໍ່ໃສ່ຝຸ່ນຫຍັງໝົດ. ຫຼັງຈາກນັ້ນຈຶ່ງເລີ້ມໃສ່ຝຸ່ນເພີ້ມຂຶ້ນຕາມອາຍຸ. ປະລິມານຝຸ່ນທີ່ຄວນໃສ່ໃນສວນກ້າເບ້ຍໄດ້ກຳນົດໄວ້ດັ່ງນີ້:

1. ປະລິມານຝຸ່ນໃສ່ສວນກ້າ

| ອາຍຸປັກຊຳ (ເດືອນ) | ທາດນີເຕີ ( N ) | ຟົດສະຟໍ ($P_2O_5$) | ກາລີຊຸນເຟດ ($K_2O$) |
|---|---|---|---|
| 2 | 9 | 4 | 7 |
| 4 | 13 | 6 | 10 |
| 6 | 17 | 8 | 14 |
| 8 | 21 | 12 | 19 |
| ລວມ | 60 | 30 | 50 |

### 4.3 ວິທີໃສ່ຝຸ່ນ

ລະລາຍຝຸ່ນ NPK ໃນບົວຫົດນ້ຳແລ້ວຫົດໃຫ້ສະໝ່ຳສະເໝີຕາມໜ້າໜານ (ຄວາມເຂັ້ມຂຸ້ນ 1%) ຫຼັງຈາກນັ້ນໃຊ້ນ້ຳທຳມະດາຫົດລ້າງ. ເວລາໃດຍອດປົ່ງອອກຍາວ, ມີໃບ 2-3 ໃບ ອາດສີດພົ່ນຢູເຣຍລະລາຍນ້ຳເຂັ້ມຂຸ້ນ 2%ນ້ຳ1 ລິດ/ 5ມ$^2$. ໃນເວລາດຽວກັນນັ້ນຄວນສີດປະສົມກັບຢາຂ້າແມງໄມ້, ສີດພົ່ນພາຍຫຼັງໃສ່ຝຸ່ນແຕ່ລະຄັ້ງ.

### 4.4 ການປ້ອງກັນແມງໄມ້ທຳລາຍ ແລະ ການເສຍຫຍ້າ

ໃນສວນກ້າຊາ ໂດຍປົກກະຕິມັກປາກົດມີແມງໄມ້ເກີດຂຶ້ນ ໂດຍສະເພາະແມ່ນແມງເພ້ຍຂຽວ, ແມງປີກແຂງ,...ຕ້ອງຕິດຕາມກວດກາເລື້ອຍໆ ເພື່ອຈະໄດ້ກຳຈັດດ້ວຍຢາຂ້າແມງໄມ້ ເຊັ່ນ: Actara, Acelant,..ສິ່ງທີ່ຄວນເອົາໃຈໃສ່ແມ່ນສີດຢາປ້ອງກັນຍອດເນົ່າ, ພະຍາດໃບແຫ້ມ, ໃບຈຸດ. ແຕ່ລະຊະນິດພະຍາດ, ແມງໄມ້ມີລັກສະນະແຕກຕ່າງກັນສະນັ້ນຄວນໃຊ້ຢາກຳຈັດໃຫ້ຖືກຕ້ອງຈຶ່ງຈະໄດ້ຮັບຜົນ. ສວນກ້າຄວນອານາໄມເປັນປະຈຳໃຫ້ສະອາດ ແລະ ກັ່ງງ, ເກັບກວດກິ່ງປັກຊຳທີ່ຕາຍ ແລະ ໃບທີ່ລົ່ນອອກ, ຫຼືກຫຍ້າອອກ ເພື່ອຫຼີກເວັ້ນການແຍ່ງອາຫານລະຫວ່າງຫຍ້າ ແລະ ເບ້ຍຊາ.

### 4.5 ການປູກສ້າມ ແລະ ຕອນຍອດ

ເບ້ຍຊາທີ່ຕາຍ ຫຼື ຕິດພະຍາດຄວນຫຼົກຖິ້ມແລ້ວເອົາເບ້ຍທີ່ແຂງແຮງປູກທົດແທນ.ລະດູການປັກຊຳສ້າມທີ່ເໝາະສົມທີ່ສຸດ ແມ່ນເດືອນທຳອິດພາຍຫຼັງປັກຊຳ, ຖ້າກິ່ງ

ປັກຊຳມີຊໍ່ດອກກໍ່ຄວນເດັດຊໍ່ອອກໃຫ້ໝົດ. ກ່ອນຈະນຳເອົາເບ້ຍຊາໄປປູກ 1 ເດືອນ ຄວນຈະຕັດຍອດຕົ້ນທີ່ສູງອອກ.

**4.6 ການປັບແສງ**

ພາຍຫຼັງເບ້ຍຊາປົ່ງຮາກ ແລະ ຕຸ່ມຕາຍອດ, ແມ່ນຊ່ວງທີ່ຄວນມີການປັບແສງ ສະຫວ່າງເທື່ອລະເລັກເທື່ອໜ້ອຍ. ເປີດຕາໜ່າງກັນແສງເທື່ອລະໜ້ອຍໃນມື້ທີ່ອາກາດຊຸ່ມເຢັນ. ກ່ອນຈະນຳເອົາໄປປູກ 1 ເດືອນ ຕ້ອງເປີດຕາໜ່າງບັງແສງອອກໃຫ້ໝົດ, ເພື່ອຝຶກເບ້ຍຊາໃຫ້ປັບຕົວເຂົ້າກັບເງື່ອນໄຂທຳມະຊາດ. ໂດຍສົມທົບກັບການຈັດລຽງລະດັບເບ້ຍຊາ, ບັນດາເບ້ຍຊາທີ່ໄດ້ມາດຕະຖານແມ່ນເອົາໄປຝຶກແສງ ແລະ ຄວາມຊຸ່ມເພື່ອໃຫ້ເບ້ຍຊາແຂງແຮງ, ສຳລັບບັນດາເບ້ຍທີ່ອ່ອນແອ ແມ່ນສືບຕໍ່ບົວລະບັດຮັກສາໄວ້ໃນສວນກ້າ.

**4.7 ມາດຕະຖານເບ້ຍຊາທີ່ຈະນຳໄປປູກ**

ອາຍຸເບ້ຍຊາເພາະລ້ຽງໃນສວນກ້າແມ່ນ 8-12 ເດືອນ ມີລວງສູງ 20 ຊຕມ, ຂຶ້ນໄປມີໃບ 6-8 ໃບ, ມີເສັ້ນຜ່າສູນເງົ້າຕົ້ນ 3-4 ມມ ສ່ວນຂອງລຳຕົ້ນມີສີກະເບົາກວມເອົາຫຼາຍກວ່າ ຫຼື ເທົ່າກັບ ½ ຂອງລວງຍາວລຳຕົ້ນ. ໃບມີສີຂຽວສົດໃສ, ປອດພະຍາດບົ້ງແມງ, ເບ້ຍຕ້ອງໄດ້ຕອນຍອດກ່ອນເຄື່ອນອອກສວນກ້າເພື່ອນຳເອົາໄປປູກຕາມພື້ນທີ່ສວນປູກທີ່ໄດ້ກະກຽມໄວ້.